# ບົດບັນທຶກຄວາມເຂົ້າໃຈ
# ວ່າດ້ວຍການຮ່ວມມືໃນການດຳເນີນການເຝົ້າລະວັງ, ຄັດເລືອກ, ປິ່ນປົວ ແລະ ນຳສົ່ງຄົນເຈັບ ແລະ ຊາກສົບ
# ຜ່ານດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ-ດ່ານຖາວອນສະພານມິດຕະພາບ 2 ມຸກດາຫານ
# ລະຫວ່າງ
# ດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ-ສະພານມິດຕະພາບ 2 ມຸກດາຫານ -ໂຮງໝໍແຂວງ ສະຫວັນນະເຂດ-ໂຮງພະຍາບານມຸກດາຫານ

- - - - - - - - - - - - -

ກົດລະບຽບສາກົນດ້ານສາທາລະນະສຸກ 2005(**International Health Regulation 2005 IHR)** ວ່າດ້ວຍການຮ່ວມມືກັບຕ່າງປະເທດ ໄດ້ກຳນົດໃຫ້ດ່ານເຂົ້າ-ອອກປະເທດ ມີພາລະກິດຫລັກໃນການເຝົ້າລະວັງ ຄວບຄຸມພະຍາດ ແລະ ຄັດເລືອກຜູ້ໂດຍສານ, ຍານພາຫະນະ ແລະ ສິນຄ້າທີ່ນຳເຂົ້າ-ສົ່ງອອກ, ການຮັບ ແລະ ນຳສົ່ງຄົນເຈັບ ຜ່ານຊາຍແດນລະຫວ່າງປະເທດ.

ແຂວງສະຫວັນນະເຂດ ກັບ ຈັງຫວັດມຸກດາຫານ ມີຂົວມິດຕະພາບ 2 ເຊື່ອມຕໍ່ລະຫວ່າງກັນ, ປະຊາຊົນທັງສອງຝ່າຍມີສາຍສຳພັນກັນມາຍາວນານ, ມີການເດີນທາງໄປມາຫາສູ່ກັນ, ມີການຮ່ວມມືຊ່ວຍເຫລືອ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ມາຢ່າງຕໍ່ເນື່ອງ. ອີກທັງພະແນກສາທາລະນະສຸກແຂວງ ສະຫວັນນະເຂດ ແລະ ສຳນັກງານສາທາລະນະສຸກຈັງຫວັດມຸກດາຫານ ໄດ້ມີບົດບັນທຶກຄວາມເຂົ້າໃຈ (Memorandum of Understanding, MOU) ຮ່ວມກັນທັງສອງຝ່າຍລວມທັງໝົດ 9 ຄັ້ງ, ສະບັບທຳອິດໃນຄັ້ງວັນທີ 1 ຕຸລາ 1991 ແລະ ສະບັບທ້າຍສຸດ ວັນທີ 2 ມິຖຸນາ 2014 ວ່າດ້ວຍການຮ່ວມມືໃນການພັດທະນາວຽກງານສາທາລະນະສຸກຊາຍແດນ ລາວ-ໄທ.

ເພື່ອເປັນບ່ອນອີງ ໃຫ້ການພັດທະນາເປັນເມືອງສຸຂະພາບອາຊຽນ ແລະ ການຈັດຕັ້ງປະຕິບັດກົດລະບຽບສາກົນດ້ານສາທາລະນະສຸກສາກົນ 2005 ລວມທັງມີການດຳເນີນຈັດຕັ້ງປະຕິບັດ ຕາມໂຄງການຮ່ວມມື ເຝົ້າລະວັງພະຍາດໃນບັນດາປະເທດລຸ່ມແມ່ນ້ຳຂອງ (Mekong Basin Disease Surveillance, MBDS) ຮ່ວມກັນມາຕັ້ງແຕ່ປີ 2003 ເຖິງປະຈຸບັນ ແລະ ໄດ້ມີການລົງນາມໃນບົດບັນທຶກຄວາມເຂົ້າໃຈ ລະຫວ່າງດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ ກັບດ່ານຖາວອນສະພານມິດຕະພາບ 2 ມຸກດາຫານ ຮ່ວມກັບໂຮງໝໍແຂວງສະຫວັນນະເຂດ ແລະ ໂຮງພະຍາບານມຸກດາຫານ ຕັ້ງແຕ່ວັນທີ 24 ສິງຫາ 2010 ແລ້ວນັ້ນ.

ເພື່ອເສີມຂະຫຍາຍການຮ່ວມມືໃນການຈັດຕັ້ງປະຕິບັດຜ່ານມາ ແລະ ການພັດທະນາຊ່ອງທາງເຂົ້າອອກປະເທດຢ່າງຕໍ່ເນື່ອງ, ມີປະສິດທິພາບ ແລະ ເປັນຮູບປະທຳ, ສອດຄ່ອງກັບແຜນການຈັດຕັ້ງປະຕິບັດ ໃນເຂດຄວບຄຸມຮ່ວມກັນ (Common Control Area, CCA) ຕາມຂໍ້ຕົກລົງໃນການຂົນສົ່ງ ສິນຄ້າຂ້າມຊາຍແດນ ຂອງກຸ່ມປະເທດໃນອະນຸພາກແມ່ນ້ຳຂອງ (Greater Mekong Sub Region Cross-Border Transport Agreement GMS-CBTA) ດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ ກັບ ດ່ານຖາວອນສະພານມິດຕະພາບ 2 ມຸກດາຫານ ຮ່ວມກັບ ໂຮງໝໍແຂວງສະຫວັນນະເຂດ ແລະ ໂຮງພະຍາບານຈັງຫວັດມຸກດາຫານ ໄດ້ຕົກລົງການຮ່ວມມືຈັດຕັ້ງປະຕິບັດ ວຽກງານດ້ານການເຝົ້າລະວັງ, ຄັດເລືອກ, ປິ່ນປົວ, ນຳສົ່ງຄົນເຈັບ ແລະ ຊາກສົບຜ່ານດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ-ມຸກດາຫານດັ່ງນີ້:

1. ດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ ແລະ ດ່ານຖາວອນ ສະພານມິດຕະພາບ 2 ມຸກດາຫານ

1.1) ດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ ແລະ ດ່ານຖາວອນ ສະພານມິດຕະພາບ 2 ມຸກດາຫານ ມີພາລະບົດບາດຮ່ວມກັນດັ່ງນີ້:

1.1.1 ປະສານງານກັບໜ່ວຍງານທີ່ກ່ຽວຂ້ອງໃນດ່ານສາກົນ ເພື່ອອຳນວຍຄວາມສະດວກ, ຊ່ວຍເຫຼືອ

ສະໜັບສະໜູນ ແລະ ຮ່ວມມືໃນການຮັບ-ສົ່ງຄົນເຈັບ ຫລື ຊາກສົບ ທັງກໍລະນີປົກກະຕິ ແລະ ກໍລະນີສຸກເສີນ ຈາກໂຮງໝໍແຂວງສະຫວັນນະເຂດ ຫລື ໂຮງພະຍາບານມຸກດາຫານ.

1.1.2 ອໍານວຍຄວາມສະດວກ ໃນການນໍາສົ່ງຄົນເຈັບ ຫລື ຊາກສົບ ຈາກເຂດຄວບຄຸມຮ່ວມກັນ (Common Control Area, CCA) ຂອງແຂວງສະຫວັນນະເຂດ ຫລື ຈັງຫວັດມຸກດາຫານໄປ ຍັງໂຮງໝໍແຂວງສະຫວັນນະເຂດ ຫລື ໂຮງພະຍາບານມຸກດາຫານ.

1.1.3 ມີການແລກປ່ຽນຂໍ້ມູນຂ່າວສານ ແລະ ການສື່ສານລະຫວ່າງກັນ.

1.1.4 ມີການພັດທະນາຄວາມອາດສາມາດບຸກຄະລາກອນ ແລະ ແລກປ່ຽນການຮຽນຮູ້ຮ່ວມກັນ.

1.1.5 ໃຫ້ການສະໜັບສະໜູນກິດຈະກໍາອື່ນໆ ຕາມທີ່ເຫັນສົມຄວນຮ່ວມກັນ.

**1.2) ໜ່ວຍງານສາທາລະນະສຸກຄວບຄຸມພະຍາດຕິດຕໍ່ລະຫວ່າງປະເທດຂົວມິດຕະພາບ 2 ສະຫວັນນະເຂດ ແລະ ດ່ານຄວບຄຸມພະຍາດຕິດຕໍ່ລະຫວ່າງ ປະເທດສະພານມິດຕະພາບ 2 ມຸກດາຫານມີພາລະບົດບາດຮ່ວມກັນດັ່ງນີ້:**

1.2.1 ດໍາເນີນການເຝົ້າລະວັງ, ຄັດເລືອກຜູ້ໂດຍສານຜ່ານດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ-ມຸກດາຫານ ໃນກໍລະນີປົກກະຕິ ແລະ ກໍລະນີສຸກເສີນ.

1.2.2 ກວດກາເບື້ອງຕົ້ນ, ປະຖົມພະຍາບານ ແລະ ນໍາສົ່ງຄົນເຈັບຈາກ ເຂດຄວບຄຸມຮ່ວມກັນຂອງແຂວງສະຫວັນນະເຂດ ຫລື ຈັງຫວັດມຸກດາຫານ ໄປໂຮງໝໍແຂວງສະຫວັນນະເຂດ ຫລື ໂຮງພະຍາບານມຸກດາຫານ.

1.2.3 ປະສານງານກັບໜ່ວຍງານໃນດ່ານສາກົນ ເພື່ອອໍານວຍຄວາມສະດວກແກ່ພະນັກງານ ແລະ ລົດນໍາ-ສົ່ງຄົນເຈັບຂອງໂຮງໝໍແຂວງສະຫວັນນະເຂດ ຫລື ໂຮງພະຍາບານມຸກດາຫານ ໃນການຮັບ-ສົ່ງຄົນເຈັບ ຫລື ຊາກສົບ ລະຫວ່າງປະເທດ ທັງກໍລະນີປົກກະຕິ ແລະ ກໍລະນີສຸກເສີນ.

1.2.4 ໃຫ້ມີຜູ້ປະສານງານ, ກໍານົດຮູບແບບການສື່ສານ, ການລາຍງານ ແລະ ການສົ່ງຂໍ້ມູນຄົນເຈັບລະຫວ່າງ ພະນັກງານປະຈໍາດ່ານຄວບຄຸມພະຍາດຕິດຕໍ່ ສະຫວັນນະເຂດ-ມຸກດາຫານ ໃນກໍລະນີທີ່ມີການຮັບ-ສົ່ງຄົນເຈັບ ຫລື ຊາກສົບ ລະຫວ່າງໂຮງໝໍແຂວງສະຫວັນນະເຂດ ກັບ ໂຮງພະຍາບານມຸກດາຫານ ຫລື ໂຮງໝໍອື່ນໆທີ່ຕ້ອງຜ່ານດ່ານສາກົນ ໃນກໍລະນີປົກກະຕິ ແລະ ກໍລະນີສຸກເສີນ.

1.2.5 ລວບລວມເອກະສານຂໍ້ມູນຄົນເຈັບ ທັງຈາກສື່ເອເລັກໂຕຣນິກ ຫລື ໃບນໍາສົ່ງຄົນເຈັບໃນເມື່ອ ມີການສົ່ງຕໍ່ ຫລື ສົ່ງກັບລະຫວ່າງໂຮງໝໍ; ໃນກໍລະນີທີ່ຕ້ອງເຝົ້າລະວັງ ແລະ ສອບສວນທາງລະບາດວິທະຍາ ຈະຕ້ອງແຈ້ງໃຫ້ໜ່ວຍງານທີ່ກ່ຽວຂ້ອງຊາບເຊັ່ນ: ພະແນກສາທາລະນະສຸກແຂວງສະຫວັນນະເຂດ, ສໍານັກງານສາທາລະນະສຸກຈັງຫວັດມຸກດາຫານ, ໜ່ວຍງານສາທາລະນະສຸກປະຈໍາດ່ານສາກົນເປັນຕົ້ນ.

1.2.6 ກວດສອບເອກະສານການຮັບ-ສົ່ງຊາກສົບ, ໃບຢັ້ງຢືນການເສຍຊີວິດ, ຄວາມຮຽບຮ້ອຍໃນການຫຸ້ມຫໍ່ຊາກສົບ ໃນກໍລະນີມີການຮັບ-ສົ່ງຊາກສົບຈາກໂຮງໝໍຜ່ານດ່ານສາກົນເພື່ອຄວາມຖືກຕ້ອງຕາມລະບຽບກົດໝາຍ.

1.2.7 ໃຫ້ຄວາມຮູ້ໃນການສື່ສານຄວາມສ່ຽງ, ແຈກຢາຍອຸປະກອນປ້ອງກັນຕົນເອງ (Personal Protective Equipment, PPE) ໃນກໍລະນີມີການລະບາດ ຂອງພະຍາດຮ້າຍແຮງ ໃຫ້ແກ່ພະນັກງານໜ່ວຍງານຕ່າງໆໃນດ່ານສາກົນຕາມຄວາມເໝາະສົມ.

**2. ໂຮງໝໍແຂວງສະຫວັນນະເຂດ ແລະ ໂຮງພະຍາບານມຸກດາຫານ ມີພາລະບົດບາດຮ່ວມກັນດັ່ງນີ້:**

2.1 ຮັບ-ສົ່ງຄົນເຈັບ ຫລື ຊາກສົບ ລະຫວ່າງໂຮງໝໍແຂວງສະຫວັນນະເຂດ ກັບໂຮງພະຍາບານມຸກດາຫານ ໂດຍຜ່ານດ່ານສາກົນ.

2.2 ຮັບ-ສົ່ງຄົນເຈັບ ຈາກເຂດຄວບຄຸມຮ່ວມກັນ ທີ່ດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ-ມຸກດາຫານ ໃນກໍລະນີມີການຮ້ອງຂໍຈາກເຂດດັ່ງກ່າວ.

2.3 ໃນກໍລະນີຮັບ-ສົ່ງຄົນເຈັບ ຫຼື ຊາກສົບ ລະຫວ່າງກັນ ໂຮງໝໍທັງສອງ ຕ້ອງປະສານງານກັບໜ່ວຍງານສາທາລະນະສຸກ ຄວບຄຸມພະຍາດຕິດຕໍ່ ປະຈຳດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ ແລະ ດ່ານຖາວອນສະພານມິດຕະພາບ 2 ມຸກດາຫານ.

2.4 ໃຫ້ການສະໜັບສະໜູນ ຊ່ວຍເຫລືອຕາມເງື່ອນໄຂຕົວຈິງ ແລະ ຄວາມເໝາະສົມໃນການພັດທະນາປະສິດທິພາບ, ຄວາມຮູ້ແກ່ພະນັກງານດ່ານສາກົນ ແລະ ດ່ານຖາວອນ ເຊັ່ນ: ຄວາມຮູ້ເລື່ອງພະຍາດຕິດຕໍ່, ການຝຶກຊ້ອມແຜນປ້ອງກັນການຕິດເຊື້ອ ຂອງພະນັກງານ, ການໃສ່ຊຸດປ້ອງກັນຕົນເອງ ເປັນຕົ້ນ.

2.5 ໃຫ້ການສະໜັບສະໜູນ ຊ່ວຍເຫລືອໃນກິດຈະກຳອື່ນໆ ທີ່ເໝາະສົມຮ່ວມກັນ.

ບົດບັນທຶກຄວາມເຂົ້າໃຈສະບັບນີ້ ມີຜົນສັກສິດນັບແຕ່ ວັນທີ່ທັງສອງຝ່າຍໄດ້ລົງນາມເປັນຕົ້ນໄປ ແລະສາມາດປັບປຸງຕາມຂໍ້ຕົກລົງຮ່ວມກັນຂອງທັງສອງຝ່າຍ.

ບົດບັນທຶກສະບັບນີ້ ເຮັດຂຶ້ນທີ່ໂຮງແຮມມຸກດາຫານແກຣນ ຈັງຫວັດມຸກດາຫານ ໃນວັນທີ 28 ກໍລະກົດ 2016, ເຮັດເປັນສອງພາສາ: ພາສາລາວ ແລະ ພາສາໄທ, ທັງສອງພາສາ ມີຄຸນຄ່າເທົ່າທຽມກັນ.

ດ່ານສາກົນຂົວມິດຕະພາບ 2
ແຂວງ ສະຫວັນນະເຂດ
ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ທ່ານ ບຸນຄຳ ພຸດທິຈັກ
ຫົວໜ້າດ່ານສາກົນຂົວມິດຕະພາບ 2 ສະຫວັນນະເຂດ

ຊ່ອງທາງເຂົ້າອອກປະເທດພຣົມແດນສະພານມິດຕະພາບ 2
ຈັງຫວັດມຸກດາຫານ
ແຫ່ງຣາຊະອານາຈັກໄທ

ນາຍ ທະວັດໄຊ ພອນໄພລິນ ຜູ້ອຳນວຍການແຂວງທາງຫລວງມຸກດາຫານ, ປະທານຄະນະກຳມະການພັດທະນາດ່ານຖາວອນ ສະພານມິດຕະພາບ 2 ມຸກດາຫານ

ໂຮງໝໍແຂວງສະຫວັນນະເຂດ

ດຣ ກອງສີ ບາງສິດທິເດດ

ດຣ.ກອງສີ ບາງສິດທິເດດ
ຜູ້ອຳນວຍການໂຮງໝໍແຂວງສະຫວັນນະເຂດ

ໂຮງພະຍາບານມຸກດາຫານ

ນາຍແພດ ບັນສຸ ພລາບຸວິງສ໌
ຜູ້ອຳນວຍການໂຮງພະຍາບານມຸກດາຫານ